# ເງິນສະໜັບສະໜູນການດູແລເດັກ

ພຶດສະພາ 2006

ໂຄງການເງິນສະໜັບສະໜູນການດູແລເດັກຊ່ວຍຈ່າຍຄ່າດູແລເດັກ. ເງິນນີ້ຈະຊ່ວຍຄອບຄົວໃນປະເພດລຸ່ມນີ້:

- ຄອບຄົວທີ່ໄດ້ຮັບການຊ່ວຍເຫຼືອຊົ່ວຄາວສຳຫຼັບ (Temporary Assistance for Families - TAF) – ໂຄງການນີ້ຊ່ວຍໃຫ້ຄອບຄົວມີ ແລະ ສາມາດຮັກສາວຽກໄວ້ໄດ້.
- ຄອບຄົວທີ່ເຮັດວຽກມີລາຍໄດ້ຕ່ຳ.
- ບາງຄອບຄົວທີ່ມີກິດຈະກຳການສຶກສາ ແລະ ຝຶກອົບຮົມ ນີ້ຈະຊ່ວຍໃຫ້ສາມາດຮັດສາວຽກ ຫຼື ໄດ້ວຽກທີ່ດີກວ່າ.
- ພໍ່ແມ່ທີ່ເປັນໄວລຸ້ນທີ່ຈົບມັດທະຍົມ ຫຼື GED.

**ເພື່ອໃຫ້ເໝາະສົມກັບການຊ່ວຍເຫຼືອ ຄອບຄົວຕ້ອງເຮັດດັ່ງນີ້:**

ຖ້າພໍ່ແມ່/ຜູ້ປົກຄອງ/ຜູ້ດູແລ ຕ້ອງການຜູ້ດູແລເດັກ, ທາງໂຄງການສາມາດຊ່ວຍທາງການເງິນໄດ້. ບຸກຄົນຕ້ອງສະມັກ ແລະສາມາດເປັນຕົວແທນໃຫ້ໂຕເອງໄດ້. ຄອບຄົວ ແລະ ເດັກຕ້ອງອາສັຍຢູ່ຣັຖຄານຊາສ (Kansas). ພວກເຂົາຕ້ອງໃຫ້ຂໍ້ມູນລາຍໄດ້ທັງໝົດ. ຖ້າພໍ່ມ່ບໍ່ໄດ້ຢູ່ໃນເຮືອນ, ຜູ້ທີ່ຢູ່ໃນເຮືອນຕ້ອງດຳເນີນການຮ່ວມກັບເຈົ້າໜ້າທີ່ທາງກົດໝາຍກ່ຽວກັບການຊ່ວຍເຫຼືອເດັກ.

ເດັກຕ້ອງມີອາຍຸຕ່ຳກວ່າ 13 ປີ. ຖ້າເດັກອາຍຸ 13-18 ບໍ່ສາມາດເບິ່ງແຍງໂຕເອງໄດ້, ພວກເຂົາຕ້ອງມີຄຸນສົມບັດພຽງພໍເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອໂດຍຈະພິຈາລະນາໄປແຕ່ລະກໍລະນີ. ພະນັກງານຈະພິຈາລະນາທັງທັກສະທາງດ້ານຮ່າງກາຍ ແລະ ຈິດໃຈ. ຖ້າສານມອງຂ້າມເດັກ, ເດັກຜູ້ນັ້ນອາດເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອ.

**ຂໍ້ມູນດ້ານລາຍຮັບ:**

ພະນັກງານຈະພິຈາລະນາລາຍໄດ້ປະຈຳເດືອນຂອງສະມາຊິກແຕ່ລະຄົນໃນຄອບຄົວ. ລາຍຮັບລວມທັງຄ່າຈ້າງກ່ອນຫັກພາສີ ແລະ ການສະໜັບສະໜູນເດັກ. ພະນັກງານຈະບໍ່ໄລ່ບາງລາຍໄດ້ເຊັ່ນ ຄ່າ SSI ແລະທຶນກູ້ຢືມຂອງນັກຮຽນ.

ຖ້າລາຍໄດ້ຂອງຄອບຄົວຖືກກັບມາດຕະຖານຂອງໂຄງການ. ພວກເຂົາອາດເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອດ້ານການດູແລເດັກ. ຄອບຄົວໃຊ້ການຊ່ວຍເຫຼືອນີ້ໃນຄ່າໃຊ້ຈ່າຍການດູແລເດັກຈາກຜູ້ໃຫ້ບໍລິການທີ່ພວກເຂົາເລືອກເອງ. ເກືອບທັງໝົດຂອງຄອບຄົວຕ້ອງຈ່າຍບາງສ່ວນຂອງຄ່າໃຊ້ຈ່າຍໃນການດູແລເດັກຈຳນວນເງິນທີ່ຊ່ວຍເຫຼືອນັ້ນຂຶ້ນກັບແຕ່ລະຄອບຄົວອີງຕາມແຕ່ລະກໍລະນີ.

ແນວທາງການໃຫ້ເງິນສູງສຸດປະຈຳເດືອນມີດັ່ງນີ້:

- ຄອບຄົວຂະໜາດ 2 ຄົນ - ໄດ້ຮັບ $2,035
- ຄອບຄົວຂະໜາດ 3 ຄົນ - ໄດ້ຮັບ - $2,559
- ຄອບຄົວຂະໜາດ 4 ຄົນ - ໄດ້ຮັບ - $3,084
- ຄອບຄົວຂະໜາດ 5 ຄົນ - ໄດ້ຮັບ - $3,608
- ຄອບຄົວຂະໜາດ 6 ຄົນ - ໄດ້ຮັບ - $4,131
- ຄອບຄົວຂະໜາດ 7 ຄົນ - ໄດ້ຮັບ - $4,656
- ຄອບຄົວຂະໜາດ 8 ຄົນ - ໄດ້ຮັບ - $5,180
- ຄອບຄົວຂະໜາດ 9 ຄົນ - ໄດ້ຮັບ - $5,704
- ຄອບຄົວຂະໜາດ 10 ຄົນ - ໄດ້ຮັບ - $6,229
- ຄອບຄົວຂະໜາດ 11 ຄົນ - ໄດ້ຮັບ - $6,753
- ຄອບຄົວຂະໜາດ 12 ຄົນ - ໄດ້ຮັບ - $7,276

**ຜູ້ໃຫ້ການດູແລເດັກ :**

ພໍ່ແມ່ເລືອກຜູ້ໃຫ້ການດູແລເດັກຈາກປະເພດເຫຼົ່ານີ້:

- ສູນດູແລເດັກທີ່ໄດ້ຮັບໃບອານຸຍາດ
- ເຮືອນໃຫ້ການດູແລເດັກທີ່ໄດ້ຮັບໃບອານຸຍາດ
- ເຮືອນໃຫ້ການດູແລເດັກເປັນກຸ່ມທີ່ໄດ້ຮັບໃບອານຸຍາດ
- ເຮືອນດູແລເດັກທີ່ລົງທະບຽນ
- ຍາດພີ່ນ້ອງຂອງເດັກ (ເດັກນ້ອຍໄປຢູ່ເຮືອນຍາດພີ່ນ້ອງ)
- ຜູ້ໃຫ້ບໍລິການມາດູແລເດັກທີ່ບ້ານ

ຖ້າບຸກຄົນນັ້ນດູແລເດັກດ້ວຍຕົວເອງ, SRS ຈະບໍ່ໃຫ້ການຊ່ວຍເຫຼືອ.ແລະຖ້າຜູ້ໃຫ້ການດູແລເດັກຢູ່ໃນຄົວເຮືອນນັ້ນກໍ່ຈະບໍ່ໄດ້ຮັບການຊ່ວຍເຫຼືອຈາກ SRS ເຊັ່ນດຽວກັນ. ຜູ້ໃຫ້ບໍລິການຕ້ອງລົງຊື່ນຳ SRS ເພື່ອໃຫ້ມີສິດຕາມກົດໝາຍທີ່ຈະໄດ້ຮັບຄ່າຈ້າງຈາກພໍ່ແມ່ເດັກ. ພວກເຂົາຕ້ອງສາມາດຮັບຄ່າຈ້າງທາງເອເລັກໂຕຣ (ອນເງິນໂດຍກົງ) ໃນບັນຊີທະນາຄານ .

**ກົດລະບຽບສຳຫຼັບຜູ້ທີ່ສົນໃຈລົງຊື່ໃນ SRS ເພື່ອໃຫ້ບໍລິການຄອບຄົວທີ່ໄດ້ຮັບການຊ່ວຍເຫຼືອໂທມາທີ່ 1-888-369-4777 ຫຼືມາທີ່ຫ້ອງການ SRS ປະຈຳທ້ອງຖິ່ນ.**

**ພໍ່ແມ່ຈະຈ່າຍແນວໃດ**

ການຊ່ວຍດູແລເດັກແມ່ນອອກໃຫ້ຄອບຄົວທີ່ໃຊ້ຜົນປະໂຫຍດຈາກການໂອນທາງອີເລັກໂຕຣ (Electronic Benefit transfer -EBT) ຂອງບັດ Vision card. ບັດນີ້ຄືກັນກັບບັດສິນເຊື່ອ. ບັດ Vision card ຍັງໃຫ້ການຊ່ວຍເຫຼືອດ້ານເງິນສົດ ແລະ ອາຫານ. ການຊ່ວຍເຫຼືອຈະຖືກໂອນເຂົ້າບັນຊີການຊ່ວຍດູແລເດັກທຸກເດືອນ. ຄອບຄົວຂອງທ່ານຈະໃຊ້ການຊ່ວຍເຫຼືອນີ້ເພື່ອຈ່າຍຄ່າຕ່າງໆທາງອີເລັກໂຕຣໃນລະຫວ່າງເດືອນ. eFund ເປັນຄູ່ສັນຍາກັບຣັຖ ຄານຊາສ ເພື່ອໃຫ້ບໍລິການຜົນປະໂຫຍດຈາກການໂອນທາງອີເລັກໂຕຣ. ຈະມີການໂອນເງິນທີ່ແທ້ຈິງໃຫ້ກັບທະນາຄານທີ່ມີບັນຊີຢູ່ກໍ່ຕໍ່ເມື່ອທາງຄອບຄົວຮ້ອງຂໍມາເທົ່ານັ້ນ. ຜູ້ໃຫ້ບໍລິການບັນຊີທະນາຄານຕ້ອງລົງຊື່ນໍາ ບໍລິສັດ eFund. ເພື່ອຈະຮັບການຈ່າຍເງິນ.

**ຂໍ້ມູນເພີ່ມເຕີມ :**

ສໍາຫຼັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການເງິນສະໜັບສະໜູນການດູແລເດັກ ສາມາດຫາໄດ້ທີ່:

- ເວັບໄຊ www.srskansas.org
- ໂທ 1-888-369-4777
- ເອົາຮ່າງໃບສະມັກໄດ້ທີ່ຫ້ອງການ/ຈຸດບໍລິການ SRS ທຸກບ່ອນ

ສໍາຫຼັບການບໍລິການດ້ານອື່ນ ຫຼືຕ້ອງການຫາທີ່ຢູ່ຂອງຫ້ອງການ ຫຼື ຈຸດບໍລິການ ຫ້ອງການບໍລິການດ້ານສັງຄົມແລະການຟື້ນຟູ ໃຫ້ໃຊ້ລິ້ງທີ່ຢູ່ທ້າຍຂອງເພຈນີ້.

ປັບປຸງ: ກັນຍາ 25, 2006